NANTHAVONG. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 4. Oct – Dec 2023. Page 87-96

# ຄຳຖາມໃນການຈັດການຮຽນການສອນພາສາລາວ ຊັ້ນມັດທະຍົມປາຍ

**ແຫວນທອງ ນັນທະວົງ***

*ພາກວິຊາຄູພາສາລາວ - ວັນນະຄະດີ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ*

***ຕິດຕໍ່ພົວພັນ:***
*ແຫວນທອງ ນັນທະວົງ,*
*ສາຂາ ພາສາ - ວັດທະນະທຳລາວ,*
*ພາກວິຊາພາສາ - ວັດທະນະທຳລາວ,*
*ຄະນະອັກສອນສາດ,*
*ມະຫາວິທະຍາໄລແຫ່ງຊາດ,*
*ເບີໂທ 020 58565757, ອີເມວ*
*vandthong2012@gmail.com)*

*ມູນບົດຄວາມ:*
*ການສົ່ງບົດ: 21 ພະຈິກ2022*
*ການປັບປຸງ: 31 ສິງຫາ 2023*
*ການຕອບຮັບ: 20 ກັນຍາ 2023*

**ບົດຄັດຫຍໍ້**

ຈຸດປະສົງຂອງບົດຄົ້ນຄວ້າຄັ້ງນີ້ເພື່ອວິເຄາະລັກສະນະປະໂຫຍກຄຳຖາມໃນການຈັດການຮຽນການສອນພາສາລາວ ຊັ້ນມັດທະຍົມປາຍ ໂດຍກຳນົດເອົາປະໂຫຍກຄຳຖາມໃນການຈັດກິດຈະກຳການຮຽນ ການສອນວິຊາພາສາລາວ ເລື່ອງການອ່ານ ຊັ້ນມັດທະຍົມປາຍ ປີ 2022. ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າແບບໃຊ້ລະບຽບວິທີການຄົ້ນຄວ້າທາງດ້ານຄຸນນະພາບ, ວິເຄາະຂໍ້ມູນຈາກເອກະສານຄູ່ມືຄູວິຊາພາສາລາວ ຊັ້ນມັດທະຍົມປາຍ ປີ 2022 ຈຳນວນ 3 ເຫຼັ້ມ ເຊິ່ງກຳນົດເອົາປະໂຫຍກຄຳຖາມຈາກພາກການອ່ານທັງໝົດຈຳນວນ 48 ຂໍ້ ໂດຍວິເຄາະ ລັກສະນະຂອງຄຳສະແດງຄຳຖາມ,ຕຳແໜ່ງຂອງຄຳສະແດງຄຳຖາມໃນການຈັດການຮຽນການສອນພາສາລາວ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າໄດ້ສ້າງຂຶ້ນເອງເຊິ່ງປະກອບດ້ວຍແບບບັນທຶກປະໂຫຍກຄຳຖາມໃນການຈັດການຮຽນການສອນພາສາລາວ ເລື່ອງ ການອ່ານ ຊັ້ນມັດທະຍົມປາຍ ປີ 2022 .

**ຜົນການຄົ້ນຄວ້າພົບວ່າ:**

1) ລັກສະນະຂອງຄຳສະແດງຄຳຖາມປະກອບມີຄຳສະແດງຄຳຖາມທີ່ຖາມເຖິງສິ່ງດຽວ ແລະຄຳສະແດງຄຳຖາມທີ່ຖາມເຖິງຫລາຍສິ່ງ, ໃນນັ້ນຄຳສະແດງຄຳຖາມທີ່ສຳພັນກັບຄຳຕອບສິ່ງໃດສິ່ງໜຶ່ງ ມີ 3 ຄຳຄື: "ແມ່ນຫຍັງ","ແນວໃດ", "ເປັນຫຍັງ" ແລະ ຄຳສະແດງຄຳຖາມທີ່ສຳພັນກັບຄຳຕອບຫຼາຍສິ່ງຫລາຍຢ່າງມີ 7 ຄຳຄື: "ຫຍັງແດ່"," ປະການໃດແດ່", "ຈຸດສຳຄັນຫຍັງແດ່". "ແນວໃດແດ່". "ເລື່ອງໃດແດ່"," ປະເພດໃດແດ່", "ແບບໃດແດ່".

2) ຕຳແໜ່ງຂອງຄຳສະແດງຄຳຖາມປາກົດໃນຕຳແໜ່ງ 2 ຕຳແໜ່ງຄື: ຄຳສະແດງຄຳຖາມທີ່ຂຶ້ນຕົ້ນປະໂຫຍກ ແລະ ຄຳສະແດງຄຳຖາມທີ່ລົງທ້າຍປະໂຫຍກ.ໃນນັ້ນ ຄຳສະແດງຄຳຖາມທີ່ຂຶ້ນຕົ້ນປະໂຫຍກ ຖາມເຖິງສິ່ງດຽວເທົ່ານັ້ນໃນເຊິ່ງມີແຕ່ 1 ຄຳເຊັ່ນ: "ເປັນຫຍັງ", ສ່ວນຄຳສະແດງຄຳຖາມທີ່ລົງທ້າຍປະໂຫຍກມີ 2 ຊະນິດຄືຄຳສະແດງຄຳຖາມທີ່ຖາມເຖິງສິ່ງດຽວ ແລະຄຳສະແດງຄຳຖາມທີ່ຖາມເຖິງຫລາຍສິ່ງເຊິ່ງມີທັງໝົດ 9 ຄຳເຊັ່ນ: ແມ່ນຫຍັງ"," ແນວໃດ", "ຫຍັງແດ່"," ປະການໃດແດ່", "ຈຸດສຳຄັນຫຍັງແດ່". "ແນວໃດແດ່". "ເລື່ອງໃດແດ່"," ປະເພດໃດແດ່", "ແບບໃດແດ່".

**ຄຳສັບສຳຄັນ:** *ຄຳຖາມ, ລັກສະນະຂອງຄຳສະແດງຄຳຖາມ, ຕຳແໜ່ງຂອງຄຳສະແດງຄຳຖາມ*

# Questions in Teaching and Learning Management of Lao Language Teaching in High School

**Vandthong NANTHAVONG**

*Department of Lao language - literature teacher, Faculty of Education, National University of Laos, Lao PDR*

***Correspondence:***
*Vandthong NANTHAVONG, Department of Lao language - literature teacher, Faculty of Education, National University of Laos, Tel: +856 20 58565757, E-mail:*
vandthong2012@gmail.com

***Article Info:***
*Submitted: Nov 21, 2022*
*Revised: Aug 31, 2023*
*Accepted: Sep 20, 2023*

## Abstract

The purpose of this research was analyzed the question sentences in Lao language instruction in high school. Question sentences were selected in reading part of high school in 2022. The qualitative research method was used in this research. Three teachers' guide books of Lao language in 2022 with 48 questions were selected for collection data by analyzing the word style, position words of question of Lao language teaching instruction. The timetable for recording of qestion sentences was used in this research.

The results of research found that:

1) The style of words in question expressions that ask about one thing and many things. words in question expressions related to the answer of something have 3 words: "what", "how", "why" and words in question expressions related to multiple answers have 7 words: "what", "what kinds", "what are the important points". "How?" "What kind of story", "What kind of thing", "What kind of style".

2) The position of words in question were appeared in 2 positions: and words in question at the beginning of the sentence ask about only one thing in which there is only 1 word such as: "Why" ,while words in question at the end of the sentence have 2 types ask about one and ask about many things which have a total of 9 words such as: "what", "how", "what", "what is important", "what is the important point". "How?" "What kind of story", "What kind of thing", "What kind of style".

**Key words:** *Question, word style of question word, the position of the question word*

## 1. ພາກສະເໜີ

ພັກ - ລັດຖະບານລາວເຮົາໄດ້ໃຫ້ຄວາມສຳຄັນຕໍ່ກັບພາສາລາວຫຼາຍທີ່ສຸດ ໂດຍສະເພາະແມ່ນວົງການສຶກສາ ເຊິ່ງກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດເອົາວິຊາພາສາລາວເປັນວິຊາທີ່ສຳຄັນຢູ່ໃນກຸ່ມການຮຽນຮູ້ທີ່ສະຖານການສຶກສາທຸກຊັ້ນ, ທຸກສາຍ ແລະ ທຸກລະດັບການສຶກສາ ເຊິ່ງມັນສະແດງອອກໃນຫຼັກສູດການສອນສາມັນສຶກສາເຊັ່ນຊັ້ນປະຖົມ, ຊັ້ນມັດທະຍົມຕົ້ນ ແລະ ມັດທະຍົມປາຍ ໄດ້ກຳນົດເອົາວິຊາພາສາລາວເປັນວິຊາໜຶ່ງທີ່ສຳຄັນເວົ້າລວມ, ເວົ້າສະເພາະແມ່ນຊັ້ນມັດທະຍົມປາຍເຊິ່ງຈັດເປັນວິຊາທີ່ໄດ້ຮຽນຫຼາຍເຊິ່ງເນັ້ນໃຫ້ຜູ້ຮຽນມີຄວາມຮູ້, ມີທັກສະ ແລະ ມີວັດທະນະທຳໃນການໃຊ້ພາສາລາວເພື່ອການສື່ສານ, ພັດທະນາທັກສະການຟັງ, ການເວົ້າ, ການອ່ານ ແລະ ການຂຽນ; ພູມໃຈໃນພາສາລາວ, ປົກປັກພາສາລາວໃຫ້ມີຄວາມຜ່ອງໃສ (ບໍ່ຊອດກະຈາ), ພັດທະນາພາສາລາວໃຫ້ມີຄວາມສົມບູນຂຶ້ນ ແລະ ຮັກການອ່ານ ; ເຂົ້າໃຈຫຼັກໄວຍາກອນລາວ ແລະ ນຳເອົາໄປ   ໝູນໃຊ້ເຂົ້າໃນການດຳລົງຊີວິດຢ່າງຖືກຕ້ອງຄ່ອງແຄ້ວ, ຖືກຕາມກະລະເທສະ, ນອກຈາກນັ້ນ

ພາສາລາວຍັງເປັນເຄື່ອງມືພື້ນຖານໃນການຮຽນຮູ້ວິຊາອື່ນໆອີກດ້ວຍ. ຖ້ານັກຮຽນມີຄວາມເຂົ້າໃຈພາສາລາວການຮຽນວິຊາອື່ນໆກໍຈະພັດທະນາຂຶ້ນ (Ministry of Education, 2013).

ພາສາລາວຊາດລາວ ມີການກໍາເນີດ ແລະ ຂະຫຍາຍຕົວພ້ອມກັບການຂະຫຍາຍຂອງຊາດລາວ, ສັງຄົມລາວຜ່ານແຕ່ລະໄລຍະຂອງປະຫວັດສາດລາວ, ໂດຍພື້ນຖານແລ້ວແມ່ນນອນຢູ່ໃນກຸ່ມພາສາຄໍາໂດດຄໍາດ່ຽວ, ເວົ້າລວມແລ້ວພາສາລາວເປັນພາສາທີ່ມີປະຫວັດຄວາມເປັນມາອັນຍາວນານເຊິ່ງໄດ້ຮັບການຂະຫຍາຍຕົວດ້ານປະລິມານຂອງຄໍາສັບ ແລະ ການນໍາໃຊ້ຄໍາ, ສ້າງຖ້ອຍຄໍາ, ສໍານວນຕ່າງໆ. ຄວາມອຸດົມສົມບູນ ຂອງພາສານີ້ໄດ້ເກີດຂຶ້ນຍ້ອນປະຊາຊົນບັນດາເຜົ່າມີການເສີມສ້າງ, ປົກປັກຮັກສາ ແລະ ນໍາໃຊ້ຕະຫຼອດມາ. ດັ່ງນັ້ນ, ພາສາລາວຈຶ່ງເປັນສົມບັດທາງດ້ານວັດທະນະທໍາເຊິ່ງກໍໃຫ້ເກີດຄວາມເປັນເອກະພາບ ແລະ ເສີມສ້າງບຸກຄະລິກກະພາບຂອງຄົນໃນຊາດ, ເຮັດໃຫ້ຄົນລາວທຸກຄົນມີຄວາມທະນົງໃຈຕໍ່ຄວາມເປັນລາວ, ນອກຈາກນີ້ຍັງເປັນສື່ທີ່ສະແດງເຖິງພູມປັນຍາຂອງບັນພະບູລຸດດ້ານວັດທະນະທໍາ, ຮີດຄອງປະເພນີ ໂດຍບັນທຶກໄວ້ເປັນວັດທະນະທໍາອັນລໍ້າຄ່າຂອງຊາດ. ພາສາມີຄວາມສໍາຄັນຕໍ່ກັບຊີວິດການເປັນຢູ່ຂອງສັງຄົມມະນຸດຫຼາຍທີ່ສຸດ ແລະ ຢູ່ເທິງໜ້າໂລກກໍມີພາສາ, ການເປັນຢູ່ແຕ່ລະມື້ຄົນຜູ້ໜຶ່ງຈະຕ້ອງໃຊ້ພາສາເພື່ອເປັນພາຫະນະ ຫຼື ເປັນເຄື່ອງມືໃນການຕິດຕໍ່ສື່ສານແລກປ່ຽນຄົບຄ້າສະມາຄົມກັບຄົນອື່ນ. ສະເພາະຜູ້ທີ່ຮູ້ພາສາຕ່າງປະເທດຫຼາຍພາສາ, ນອກຈາກໃຊ້ສື່ພື້ນຖານ (ພາສາແມ່) ແລ້ວຍັງໃຊ້ພາສາອື່ນເປັນສື່ອີກດ້ວຍ (Khamhoung, 1998).

ປະໂຫຍກແມ່ນກຸ່ມຄໍາເຊິ່ງປະກອບດ້ວຍຄໍາກິລິຍາທີ່ສະແດງຄວາມຄິດໃນຮູບແບບຂອງການບອກເລົ່າ, ການປະຕິເສດ ຄໍາຖາມ … (Cambridge dictionary, 2023). ປະໂຫຍກ ແມ່ນຫົວໜ່ວຍສູງສຸດຂອງພາສາ ແລະ ແມ່ນຫົວໜ່ວຍພື້ນຖານຂອງຄໍາເວົ້າ, ມັນອາດປະກອບສ້າງແຕ່ໜຶ່ງເຖິງສາມພາກສ່ວນຂຶ້ນໄປ, ປະໂຫຍກແມ່ນ ຄໍາ ຫຼື ກຸ່ມຄໍາທີ່ຄົບຖ້ວນທາງດ້ານໂຄງສ້າງ ແລະ ເອກະລາດທາງດ້ານເນື້ອໃນ, ໃນລະ ດັບພື້ນຖານປະໂຫຍກແມ່ນ ສາມາດສື່ຄວາມໝາຍ ແລະ ອະທິບາຍກ່ຽວກັບວັດຖຸ, ເຫດການ ແລະ ການກະທໍາຕ່າງໆໄດ້ຢ່າງສົມບູນ (Onkeo, 2000).

ປະໂຫຍກຄໍາຖາມແມ່ນປະໂຫຍກທີ່ຕັ້ງຂຶ້ນ ເພື່ອສືບຖາມເຖິງຄວາມເປັນໄປຂອງສິ່ງວັດຖຸ, ເຫດການ, ປາກົດການ ຫຼື

ສະພາບການໃດໜຶ່ງທີ່ຜູ້ຖາມມີຄວາມບໍ່ເຂົ້າໃຈ, ບໍ່ຮູ້ ຫຼື ສົງໄສ ແລະ ກໍລໍຄໍາຕອບຈາກຄູ່ສົນທະນາ ຫຼື ຜູ້ຖືກຖາມ. ປະໂຫຍກຄໍາຖາມແມ່ນປະໂຫຍກທີ່ໃຊ້ທົ່ວໄປໃນການຖາມຄໍາຖາມ ເພື່ອລວບລວມຂໍ້ມູນກ່ຽວກັບບາງສິ່ງ, ອາດຈະເປັນຄໍາຖາມກ່ຽວກັບຫຍັງກໍໄດ້ ບໍ່ເປັນທາງການ ຫຼື ສະເພາະເຈາະຈົງ (BYJU, 2023, Yang, 2022).

ປະໂຫຍກຄໍາຖາມ ສ້າງຂຶ້ນເພື່ອຖາມເຖິງພາກສ່ວນຫຼັກ ແລະ ພາກສ່ວນແອ້ມຂອງປະໂຫຍກ, ຖາມທັງຮູບຄໍາມະໂນພາບ ແລະ ຄໍາພາຫະນະ, ຄໍາສ້ອຍ ກໍອາໄສວາດເວົ້າ ຫຼື ທໍານອງສຽງເວົ້າໃສ່ (Onkeo, 2000).

ຫຼັກປະໂຫຍກໃນປຶ້ມແບບຮຽນລະດັບມັດທະຍົມສຶກສາ ເຊິ່ງໄດ້ວິເຄາະໂຄງສ້າງ ແລະ ລັກສະນະຂອງປະໂຫຍກ, ພ້ອມທັງວິເຄາະຄວາມສອດຄ່ອງຂອງເນື້ອໃນກ່ຽວກັບລັກປະໂຫຍກໃນປຶ້ມແບບຮຽນລະດັບມັດທະຍົມສຶກສາ ແລະໄດ້ສະຫຼຸບຜົນການສຶກສາຄື: ໂຄງສ້າງຂອງປະໂຫຍກແມ່ນພົບຫຼາຍຮູບແບບໂດຍສະເພາະແມ່ນປະໂຫຍກສາມັນກ່ຽວພົບທັງປະໂຫຍກສອງພາກສ່ວນ ແລະ ປະໂຫຍກສາມພາກ ສ່ວນເຊິ່ງມີທັງຄໍານາມະທໍາເປັນຕົວສໍາແດງ ແລະປະໂຫຍກທີ່ບໍ່ແມ່ນຄໍານາມະທໍາເປັນຕົວສໍາແດງ, ສ່ວນປະໂຫຍກປະສົມແມ່ນພົບພຽງແຕ່ໂຄງສ້າງດຽວຄືປະໂຫຍກປະສົມຕ່າງຕົວຕັ້ງປະສານ.

ລັກສະນະຂອງປະໂຫຍກແມ່ນພົບຢູ່ 3 ລັກສະນະຄື ປະໂຫຍກບອກເລົ່າ, ປະໂຫຍກຄໍາຖາມ ແລະປະໂຫຍກບົ່ງການ (Onkeo, 2000).

ໃນຫຼັກສູດການຮຽນການສອນກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ,ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາເວົ້າລວມ,ເວົ້າສະເພາະແມ່ນຫຼັກສູດລະດັບ ມັດທະຍົມປາຍໄດ້ມີຫຼັກການ ແລະ ຈຸດໝາຍຂອງຫຼັກສູດຢ່າງຈະແຈ້ງຄື (National Research Institute for Educational Science, 2011):

**ຫຼັກການ**

1. ຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍເປັນຫຼັກສູດທີ່ນໍາໃຊ້ເປັນເອກະພາບກັນໃນທົ່ວປະ ເທດ.

2. ເປັນຫຼັກສູດທີ່ຮັບປະກັນການສ້າງຄົນຮຸ່ນໃໝ່ໄປຕາມທິດທີ່ສອດຄ່ອງກັບການພັດທະນາ ເສດຖະກິດ-ສັງຄົມຂອງປະເທດ, ມີລັກສະນະຊາດ, ວິທະຍາສາດ, ທັນສະໄໝ ແລະ ຫຍັບມໍ່ເຂົ້າກັບມາດຕະຖານຂອງສາກົນເທື່ອລະກ້າວ.

3. ສົ່ງເສີມໃຫ້ຜູ້ຮຽນໄດ້ພັດທະນາ ແລະ ຮຽນຮູ້ຢ່າງຕໍ່ເນື່ອງ ໂດຍຖືຜູ້ຮຽນມີຄວາມສຳຄັນທີ່ສຸດ ແລະ ຮັບປະກັນໃຫ້ຜູ້ຮຽນໄດ້ເສີມຂະຫຍາຍການຮຽນຂອງຕົນຕາມຄວາມສາມາດໃນການ ສຶກສາຕໍ່ໃນລະດັບສູງຂຶ້ນໄປ ຫຼື ປະກອບອາຊີບ.

4. ການຮຽນທິດສະດີຕ້ອງໄປຄຽງຄູ່ກັບພາກປະຕິບັດຕົວຈິງ.

5. ເນື້ອໃນຫຼັກສູດຕ້ອງກວມເອົາ 5 ຫຼັກມູນການສຶກສາຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ ພະລະສຶກສາ ແລະ ແຮງງານສຶກສາ; ເນື້ອໃນການຮຽນຕ້ອງມີຄວາມ ສຳຄັນ, ມີປະໂຫຍດ ແລະ ສາມາດນຳໃຊ້ເຂົ້າໃນການດຳລົງຊີວິດຕົວຈິງໄດ້.

**ຈຸດໝາຍຫຼັກສູດ**

ຈຸດໝາຍຫຼັກສູດສຳລັບຊັ້ນມັດທະຍົມຕອນປາຍເນັ້ນການສຶກສາໃຫ້ນັກຮຽນມີຄວາມຮູ້ທີ່ກວ້າງ ຂວາງຂຶ້ນ ແລະ ລົງເລິກບາງວິຊາ, ມີຄວາມສາມາດ ແລະ ທັກສະທີ່ຈຳເປັນເພື່ອຄວາມກ້າວໜ້າໃນ ການຮຽນຕໍ່ ແລະ ການດຳລົງຊີວິດ ຫຼື ປະກອບອາຊີບ; ມີຄຸນສົມບັດສິນທຳປະຕິວັດ, ກາຍເປັນ ພົນລະເມືອງດີຂອງຊາດ ແລະ ຂອງໂລກດັ່ງນີ້:

1. ຊ່ວຍໃຫ້ນັກຮຽນໄດ້ຮັບການພັດທະນາຮອບດ້ານ ແລະ ສົມສ່ວນເພື່ອໃຫ້ເຂົາເຈົ້າຈະເລີນ ເຕີບໂຕເປັນຜູ້ໃຫຍ່ທີ່ພຽບພ້ອມໄປດ້ວຍຄວາມສົມບູນທາງດ້ານຮ່າງກາຍ ແລະ ຈິດໃຈຕາມ ຈຸດພິເສດຂອງແຕ່ລະຄົນ;

2. ມີຫົວຄິດປະດິດສ້າງ, ໃຝ່ຮູ້ ໃຝ່ຮຽນ, ຮັກການອ່ານ, ຮັກການຂຽນ ແລະ ຮັກການຄົ້ນຄວ້າ; ມີທັກສະການຄິດ, ທັກສະຂະບວນການວິທະຍາສາດ ແລະ ທັກສະໃນການດຳເນີນຊີວິດ; ມີສິລະປະ, ສາມາດປັບການຄິດ, ການສະແດງອອກ ແລະ ປັບວິທີເຮັດວຽກໃຫ້ແທດເໝາະກັບສະຖານະການ;

3. ມີຄວາມຮູ້ໃນວິຊາຕ່າງໆທີ່ກວ້າງຂວາງ, ເລິກເຊິ່ງ ແລະ ສາມາດເຊື່ອມໂຍງເຂົ້າກັບ ສາກົນ; ຮູ້ທັນກັບການປ່ຽນແປງຂອງເສດຖະກິດ-ສັງຄົມ ແລະ ຄວາມກ້າວໜ້າທາງ ວິທະຍາສາດເຕັກໂນໂລຊີ; ສາມາດດຳລົງຊີວິດຢ່າງມີປະສິດທິພາບໃນຍຸກທີ່ນັບວັນ ນັບ ມີການແຂ່ງຂັນສູງຂຶ້ນ;

4. ຮັກການອອກກຳລັງກາຍ, ຮູ້ດູແລຕົນເອງໃຫ້ມີສຸຂະພາບແຂງແຮງ ແລະ ມີບຸກຄະ ລິກກະພາບທີ່ດີສະເໝີ;

5. ມີຄວາມຕື່ນຕົວປະຕິບັດຕາມກົດໝາຍ, ມີລະບຽບວິໄນ, ມີຄວາມຮັບຜິດຊອບ ແລະ ມີຄຸນສົມ ບັດສິນທຳປະຕິວັດ;

6. ຮັກລະບອບປະຊາທິປະໄຕປະຊາຊົນ, ຮັກປະເທດຊາດ ແລະ ພູມໃຈໃນຄວາມເປັນ ລາວ; ມີຄວາມສີວິໄລທາງດ້ານຈິດໃຈ, ມີຄວາມຕື່ນຕົວໃນການປົກປັກຮັກສາສິ່ງແວດລ້ອມ, ມີນໃຈມະນຸດສະທຳ ແລະ ມະນຸດສຳພັນທີ່ດີ, ມີຄວາມສາມັກຄີກັບທຸກຊົນເຜົ່າ ໃນລາວ ແລະ ເພື່ອນມິດໃນໂລກ; ສ້າງໃຫ້ນັກຮຽນມີຄ່ານິຍົມເປັນເຈົ້າຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

ຈາກຫຼັກການ ແລະຈຸດໝາຍຂອງຫຼັກສູດທີ່ເວົ້າມາຂ້າງເທິງນັ້ນເຫັນວ່າວິຊາພາສາລາວ - ວັນນະຄະດີໃນຊັ້ນມັດທະຍົມປາຍ ກໍມີເນື້ອໃນຫຼາຍສົມຄວນເພື່ອໃຫ້ຕອບສະໜອງໄດ້ຫຼັກການ ແລະຈຸດໝາຍຂອງຫຼັກສູດ, ສະນັ້ນໃນຄູ່ມືຄູຈະມີຄຳຖາມ ສຳລັບກິດຈະກຳການຈັດການຮຽນ - ການສອນໃຫ້ນັກຮຽນໄດ້ຕອບ, ໄດ້ອະທິບາຍຈາກສິ່ງທີ່ໄດ້ຮຽນມາ,ຈຶ່ງເຮັດໃຫ້ຜູ້ສຶກສາມີແນວຄິດທີ່ວິເຄາະລັກສະນະປະໂຫຍກຄຳຖາມໃນການຈັດການຮຽນການສອນວິຊາພາສາລາວ ຊັ້ນມັດທະຍົມປາຍກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ ສະບັບ ປີ 2022 ວ່າຮູບປະໂຫຍກຄຳຖາມທີ່ໃຊ້ເພື່ອການສອນເລື່ອງການອ່ານໃນຊັ້ນມັດທະຍົມປາຍມີລັກສະນະຄຳສະແດງແນວໃດ ແລະ ຕຳແໜ່ງຂອງຄຳສະແດງຄຳຖາມໃນປະໂຫຍກປັນແນວໃດ? ຖ້າຫາກອະນາຄົດໄດ້ມີໂອກາດໄດ້ຮ່ວມປັບປຸງຫຼັກສູດໂດຍສະເພາະການສ້າງກິດຈະກຳ ແລະ ຜົນໄດ້ຮັບໃນຫຼັກສູດກໍຈະເອົາບົດຄົ້ນຄວ້າສະບັບນີ້ໄປເປັນບ່ອນອີງໃນການສ້າງຄຳຖາມໃນຄູ່ມືຄູວິຊາພາສາລາວ - ວັນນະຄະດີລະດັບມັດທະຍົມປາຍໃຫ້ມີປະສິດທິພາບສູງຂຶ້ນ ແລະ ໃຫ້ສອດຄ່ອງກັບຫຼັກການ ແລະຈຸດໝາຍລວມທີ່ຕັ້ງໄວ້ໃນຫຼັກສູດ.

### 1.2 ຈຸດປະສົງຂອງການຄົ້ນຄວ້າ

- ເພື່ອວິເຄາະລັກສະນະປະໂຫຍກຄຳຖາມໃນການຈັດການຮຽນການສອນວິຊາພາສາລາວ ຊັ້ນມັດທະຍົມປາຍ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ແມ່ນແນໃສ່ການວິເຄາະລັກສະນະປະໂຫຍກຄຳຖາມໃນການຈັດການຮຽນການສອນພາສາລາວ ເລື່ອງ ການອ່ານ ຊັ້ນມັດທະຍົມປາຍ, ເປັນການວິໄຈທີ່ສ້າງຄວາມຮູ້ດ້ານພາສາລາວ,ໃຊ້ວິທີວິເຄາະຂໍ້ມູນຈາກເອກະສານຄູ່ມືຄູ ວິຊາພາສາລາວ ຊັ້ນມັດທະຍົມປາຍ ປີ 2022 ເຊິ່ງມີປະໂຫຍກຄຳຖາມທັງໝົດຈຳນວນ 48ຂໍ້ ຜູ້ຄົ້ນຄວ້າໄດ້ດຳເນີນຕາມຂັ້ນຕອນດັ່ງນີ້:

### 2.1 ການອອກແບບການຄົ້ນຄວ້າ

ການຄົ້ນຄວ້າໃນຄັ້ງນີ້ໃຊ້ລະບຽບວິທີການຄົ້ນຄວ້າທາງດ້ານຄຸນນະພາບ, ວິເຄາະຂໍ້ມູນຈາກເອກະສານຄູ່ມືຄູ ວິຊາພາສາລາວ ຊັ້ນມັດທະຍົມປາຍ ປີ 2022 ຈຳນວນ 3 ເຫຼັ້ມ ເຊິ່ງກຳນົດເອົາປະໂຫຍກຄຳຖາມຈາກພາກການອ່ານທັງໝົດຈຳນວນ 48 ຂໍ້ ໂດຍວິເຄາະ ລັກສະນະຂອງຄຳສະແດງຄຳຖາມ, ຕຳແໜ່ງຂອງຄຳສະແດງຄຳຖາມ ໃນການຈັດການຮຽນການສອນພາສາລາວ

### 2.2 ປະຊາກອນ ແລະ ກຸ່ມເປົ້າໝາຍໃນການຄົ້ນຄວ້າ

ປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ປຶ້ມຄູ່ມືຄູ ວິຊາພາສາລາວ ຊັ້ນມັດທະຍົມປາຍ ປີ 2022 ຈຳນວນ 3 ເຫຼັ້ມ.

ກຸ່ມເປົ້າໝາຍໃນການວິໄຈຄັ້ງນີ້ແມ່ນປະໂຫຍກຄຳຖາມໃນການຈັດການຮຽນການສອນພາສາລາວ ເລື່ອງ ການອ່ານ ຊັ້ນມ.5 ຈຳນວນ 15 ຂໍ້, ຊັ້ນ ມ.6 ຈຳນວນ 16 ຂໍ້, ຊັ້ນ ມ.7 ຈຳນວນ 17 ຂໍ້ ເຊິ່ງໄດ້ຄັດເລືອກເອົາສະເພາະປະໂຫຍກຄຳຖາມໃນການຈັດກິດຈະກຳການຮຽນການສອນໃນພາກການອ່ານເທົ່ານັ້ນ.

### 2.3 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີໃຊ້ໃນການຄົ້ນຄວ້າໃນຄັ້ງນີ້ເປັນເຄື່ອງມືໃນການເກັບຮອບຮວມຂໍ້ມູນຈາກການວິເຄາະເອກະສານແມ່ນແບບບັນທຶກການເກັບຮອບຮວມຂໍ້ມູນວິເຄາະລັກສະນະປະໂຫຍກຄຳຖາມໃນການຈັດການຮຽນການສອນພາສາລາວ ຊັ້ນມັດທະຍົມປາຍ.ເຊິ່ງປະກອບດ້ວຍແບບບັນທຶກປະໂຫຍກຄຳຖາມໃນການຈັດການຮຽນການສອນພາສາລາວ ເລື່ອງ ການອ່ານ ຊັ້ນມັດທະຍົມປາຍ ປີ 2022

1) ແບບບັນທຶກການເກັບຮອບຮວມຂໍ້ມູນວິເຄາະລັກສະນະຂອງຄຳສະແດງຄຳຖາມ ທີ່ຖາມເຖິງສິ່ງດຽວ ແລະ ລັກສະນະຄຳສະແດງຄຳຖາມທີ່ຖາມເຖິງຫລາຍຢ່າງ

2) ແບບບັນທຶກການເກັບຮອບຮວມຂໍ້ມູນວິເຄາະວິເຄາະລັກສະນະຂອງຄຳສະແດງຄຳຖາມ ທີ່ຂຶ້ນຕົ້ນປະໂຫຍກ ແລະຄຳສະແດງຄຳຖາມທີ່ລົງທ້າຍປະໂຫຍກ.

### 2.4 ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື

ຂັ້ນຕອນໃນການສ້າງເຄື່ອງມືຜູ້ຄົ້ນຄວ້າໄດ້ສ້າງຕາມຂັ້ນຕອນດັ່ງນີ້:

1) ສຶກສາເອກະສານ, ຕຳລາ, ບົດວິໄຈທີ່ກ່ຽວຂ້ອງກັບລັກສະນະປະໂຫຍກຄຳຖາມ ແລະ ວິທີການວິເຄາະປະໂຫຍກພາສາລາວເພື່ອກຳນົດຮູບແບບການວິເຄາະຂໍ້ມູນຕາມຈຸດປະສົງ.

2) ນຳຂໍ້ມູນຈາກຂໍ້ທີ 1 ມາສ້າງແບບບັນທຶກການເກັບຮອບຮວມຂໍ້ມູນວິເຄາະລັກສະນະປະໂຫຍກຄຳຖາມ ໂດຍອາໄສແນວຄິດການວິເຄາະລັກສະນະປະໂຫຍກຄຳຖາມຂອງ ບົວລີ ປະພາພັນ ພ້ອມຄະນະ ປີ 2015

3) ນຳຂໍ້ມູນມາວິເຄາະລັກສະນະປະໂຫຍກຄຳຖາມສົ່ງໃຫ້ປະທານທີ່ປຶກສາບົດວິໄຈພິຈາລະນາ

4) ປັບປຸງແກ້ໄຂເຄື່ອງມືຕາມຄຳແນະນຳຂອງປະທານທີ່ປຶກສາ ແລະ ນຳໄປໃຊ້ໃນການວິເຄາະລັກສະນະປະໂຫຍກຄຳຖາມ

### 2.5 ວິທີລວບລວມຂໍ້ມູນ ແລະ ການວິເຄາະຂໍ້ມູນ

ການເກັບຮອບຮວມ ແລະ ວິເຄາະຂໍ້ມູນໃນບົດວິໄຈຄັ້ງນີ້ ເປັນການເກັບຮອບຮວມຂໍ້ມູນ ແລະ ວິເຄາະຂໍ້ມູນຈາກເອກະສານຄູ່ມືຄູ ວິຊາພາສາລາວ ຊັ້ນມັດທະຍົມປາຍ ປີ 2022 ໂດຍມີຂັ້ນຕອນການເກັບຮອບຮວມ ແລະວິເຄາະຂໍ້ມູນດັ່ງນີ້ (Grade 9 teacher's guide book, 2022, Grade 10 teacher's guide book, 2022, Grade 11 teacher's guide book, 2022, Grade 12 Textbook, 2016):

1. ຜູ້ວິໄຈກຳນົດປະໂຫຍກຄຳຖາມໃນການຈັດການຮຽນການສອນພາສາລາວ ເລື່ອງ ການອ່ານ ຊັ້ນ ມ.5 ຈຳນວນ 15 ຂໍ້, ຊັ້ນ ມ.6 ຈຳນວນ 16 ຂໍ້, ຊັ້ນ ມ.7 ຈຳນວນ

17 ຂໍ້ ເຊິ່ງໄດ້ຄັດເລືອກເອົາສະເພາະປະໂຫຍກຄຳຖາມໃນການຈັດກິດຈະກຳການຮຽນການສອນໃນພາກການອ່ານເທົ່ານັ້ນ.

2. ວິເຄາະລັກສະນະຂອງຄຳສະແດງຄຳຖາມທີ່ຖາມເຖິງສິ່ງດຽວ ແລະ ຄຳສະແດງຄຳຖາມ ທີ່ຖາມເຖິງຫຼາຍສິ່ງ.

3. ວິເຄາະວິເຄາະລັກສະນະຂອງຄຳສະແດງຄຳຖາມທີ່ຂຶ້ນຕົ້ນປະໂຫຍກ ແລະຄຳສະແດງຄຳຖາມທີ່ລົງທ້າຍປະໂຫຍກ.

4. ຮຽບຮຽງ ແລະ ນຳສະເໜີຜົນການຄົ້ນຄວ້າແບບພັນລະນາວິເຄາະ

## 3. ຜົນໄດ້ຮັບ

### 3.1 ລັກສະນະຄຳສະແດງຄຳຖາມ

ລັກສະນະຄຳສະແດງຄຳຖາມແມ່ນຄຳທີ່ສະແດງໃຫ້ຮູ້ວ່າປະໂຫຍກນັ້ນເປັນປະໂຫຍກຄຳຖາມເຊັ່ນ: ຄຳວ່າໃຜ, ແມ່ນຫຍັງ, ແນວໃດ,ສິ່ງໃດ, ເປັນຫຍັງ, ຫຍັງແດ່, ແນວໃດແດ່, ອັນໃດແດ່..ບົວລີ ປະພາພັນ ພ້ອມຄະນະ ເວົ້າວ່າ (Boualy, 2015): ການຕັ້ງຄຳຖາມດ້ວຍຄຳແທນນາມບອກການຖາມປະກອບມີຄຳຖາມທີ່ຖາມເຖິງສິ່ງດຽວ ແລະຄຳຖາມທີ່ຖາມເຖິງຫລາຍສິ່ງດັ່ງລາຍລະອຽດລຸ່ມນີ້:

#### 3.1.1 ຄຳສະແດງຄຳຖາມທີ່ຖາມເຖິງສິ່ງດຽວ

ຄຳສະແດງຄຳຖາມທີ່ຖາມເຖິງສິ່ງດຽວໝາຍເຖິງການການຕັ້ງຄຳຖາມດ້ວຍຄຳແທນນາມບອກການຖາມເຊັ່ນ:ຄຳວ່າ “ໃຜ,ແນວໃດ,ໃສ,ແມ່ນຫຍັງ” ຄຳສະແດງຄຳຖາມນີ້ຈະກົງກັບຄຳສະແດງຄຳຖາມ WH- Question ໃນພາສາອັງກິດຈະໃຊ້ໄດ້ທົ່ວໄປ,ຄຳສະແດງຄຳຖາມນີ້ສຳພັນກັບຄຳຕອບສິ່ງໃດສິ່ງໜຶ່ງ ມີ 3 ຄຳຄື: “ແມ່ນຫຍັງ”,“ແນວໃດ”, “ເປັນຫຍັງ”ດັ່ງນີ້:

**ກ. “ແມ່ນຫຍັງ”**

ຄຳວ່າ “ແມ່ນຫຍັງ”ມີພຽງ 2 ຄຳຈາກປະໂຫຍກຄຳຖາມທັງໝົດ 48 ຂໍ້. ເທົ່າກັບ 4,16%

***ຕົວຢ່າງ : 1.*** ຂະບວນການຄົ້ນຄວ້າຫາຄວາມໝາຍຈາກຕົວໜັງສືແມ່ນຫຍັງ? (Grade 9 teacher's guide book, 2022) ?

***ຕອບ*** ແມ່ນຂະບວນການຄົ້ນຄວ້າຫາຄວາມໝາຍຈາກຕົວໜັງສື ຫຼື ຂໍ້ຄວາມທີ່ຜູ້ຂຽນໆໄວ້ເຊິ່ງເລີ່ມຈາກການຮັບຮູ້ຄຳ, ການອອກສຽງຄຳ, ການຮູ້ຄວາມໝາຍຂອງຄຳ, ການເຂົ້າໃຈຄວາມໝາຍຕາມຕົວອັກສອນ, ການຕີຄວາມ ແລະ ການປະສົມປະສານຄວາມຮູ້ ທີ່ໄດ້ຈາກສິ່ງທີ່ອ່ານກັບປະສົບການເດີມ ແລະ ການນຳໄປໃຊ້ໃຫ້ເກີດປະໂຫຍດ (Grade 10 Textbook, 2014).

ຈາກຕົວຢ່າງ ການສະແດງຄຳຖາມ“ແມ່ນຫຍັງ” ເປັນຄຳແທນນາມໃຊ້ແທນຄຳຖາມມີຄວາມສຳພັນກັບຄຳຕອບໂດຍເປັນຕົວແທນຂອງຄຳຕອບໃນປະໂຫຍກຄຳຖາມເຊັ່ນ: ຂະບວນການຄົ້ນຄວ້າຫາຄວາມໝາຍຈາກຕົວໜັງສືແມ່ນຂະບວນການຄົ້ນຄວ້າຫາຄວາມໝາຍຈາກຕົວໜັງສື ຫຼື ຂໍ້ຄວາມທີ່ຜູ້ຂຽນໆໄວ້ເຊິ່ງເລີ່ມຈາກການຮັບຮູ້ຄຳ, ການອອກສຽງຄຳ, ການຮູ້ຄວາມໝາຍຂອງຄຳ, ການເຂົ້າໃຈຄວາມໝາຍຕາມຕົວອັກສອນ, ການຕີຄວາມ ແລະ ການປະສົມປະສານຄວາມຮູ້ ທີ່ໄດ້ຈາກສິ່ງທີ່ອ່ານກັບປະສົບການເດີມ ແລະ ການນຳໄປໃຊ້ໃຫ້ເກີດປະໂຫຍດ.

2. ການອ່ານຈັບໃຈຄວາມສຳຄັນແມ່ນຫຍັງ? (Grade 12 Textbook, 2016)

***ຕອບ*** ການອ່ານຈັບໃຈຄວາມສຳຄັນແມ່ນ ການອ່ານເພື່ອຈັບໃຈຄວາມ ຫຼື ຂໍ້ຄິດຫຼັກຂອງເລື່ອງທີ່ອ່ານ. ເພື່ອໃຫ້ເຂົ້າໃຈເຖິງແນວຄິດຈິດໃຈຂອງຜູ້ຂຽນແຕ່ລະຫຍໍ້ໜ້າ. ໃຈຄວາມຫຼັກໝາຍເຖິງຂໍ້ຄວາມທີ່ສຳຄັນສາມາດຄວບຄຸມເນື້ອໃນປະໂຫຍກອື່ນໆໄດ້ທັງໝົດ (Grade 12 Textbook, 2016).

ຈາກຕົວຢ່າງ ການສະແດງຄຳຖາມ“ແມ່ນຫຍັງ” ເປັນຄຳແທນນາມໃຊ້ແທນຄຳຖາມມີຄວາມສຳພັນກັບຄຳຕອບໂດຍເປັນຕົວແທນຂອງຄຳຕອບໃນປະໂຫຍກຄຳຖາມເຊັ່ນ: ການອ່ານຈັບໃຈຄວາມສຳຄັນແມ່ນການອ່ານເພື່ອຈັບໃຈຄວາມ ຫຼື ຂໍ້ຄິດຫຼັກຂອງເລື່ອງທີ່ອ່ານ. ເພື່ອໃຫ້ເຂົ້າໃຈເຖິງແນວຄິດຈິດໃຈຂອງຜູ້ຂຽນແຕ່ລະຫຍໍ້ໜ້າ. ໃຈຄວາມຫຼັກໝາຍເຖິງຂໍ້ຄວາມທີ່ສຳຄັນສາມາດຄວບຄຸມເນື້ອໃນປະໂຫຍກອື່ນໆໄດ້ທັງໝົດ.

**ຂ. “ແນວໃດ”**

ຄຳວ່າ “ແນວໃດ”ມີພຽງ 26 ຄຳຈາກປະໂຫຍກຄຳຖາມທັງໝົດ 48 ຂໍ້. ເທົ່າກັບ 54,16%

***ຕົວຢ່າງ***

3. ການອ່ານເພື່ອການສຶກສາຄົ້ນຄວ້າແມ່ນອ່ານແນວໃດ

***ຕອບ*** ການອ່ານເພື່ອສຶກສາຄົ້ນຄວ້າ ແມ່ນການອ່ານເພື່ອໃຫ້ໄດ້ຮັບຄວາມຮູ້ຈາກປຶ້ມຕຳລາຕ່າງໆທີ່ໃຫ້ຂໍ້ມູນແກ່ການສຶກສາຄົ້ນຄວ້າ, ສ່ວນຜູ້ປະກອບອາຊີບຕ່າງໆກໍອ່ານເພື່ອເພີ່ມພູນຄວາມຮູ້ໃນການພັດທະນາອາຊີບໃຫ້ກ້າວໜ້າ (Grade 10 Textbook, 2014). ຈາກຕົວຢ່າງ ການສະແດງຄຳຖາມ"ແນວໃດ"ເປັນຄຳແທນນາມໃຊ້ແທນຄຳຖາມມີຄວາມສຳພັບກັບຄຳຕອບໂດຍເປັນຕົວແທນຂອງຄຳຕອບໃນປະໂຫຍກຄຳຖາມເຊັ່ນ: ການອ່ານເພື່ອສຶກສາຄົ້ນຄວ້າແມ່ນການອ່ານເພື່ອໃຫ້ໄດ້ຮັບຄວາມຮູ້ຈາກປຶ້ມຕຳລາຕ່າງໆທີ່ໃຫ້ຂໍ້ມູນແກ່ການສຶກສາຄົ້ນຄວ້າ, ສ່ວນຜູ້ປະກອບອາຊີບຕ່າງໆກໍອ່ານເພື່ອເພີ່ມພູນຄວາມຮູ້ໃນການພັດທະນາອາຊີບໃຫ້ກ້າວໜ້າ.

4. ການອ່ານຕີຄວາມໝາຍແມ່ນການອ່ານແນວໃດ?

***ຕອບ*** ການອ່ານຕີຄວາມໝາຍແມ່ນການອ່ານ ແລະ ການພິຈາລະນາຄວາມໝາຍກົງ, ຄວາມໝາຍອ້ອມທີ່ປາກົດຢູ່ໃນເນື້ອໃນຕ່າງໆ ແລ້ວສາມາດອະທິບາຍຄວາມໝາຍ ແລະ ຈຸດມຸ້ງໝາຍຂອງຜູ້ສື່ສານໄດ້ (Grade 11 Textbook, 2015). ຈາກຕົວຢ່າງ ການສະແດງຄຳຖາມ "ແນວໃດ" ເປັນຄຳແທນນາມໃຊ້ແທນຄຳຖາມມີຄວາມສຳພັບກັບຄຳຕອບໂດຍເປັນຕົວແທນຂອງຄຳຕອບໃນປະໂຫຍກຄຳຖາມເຊັ່ນ:ການອ່ານຕີຄວາມໝາຍແມ່ນການອ່ານ ແລະ ການພິຈາລະນາຄວາມໝາຍກົງ ແລະ ຄວາມໝາຍອອ້ມທີ່ປາກົດຢູ່ໃນເນື້ອໃນຕ່າງໆ ແລ້ວສາມາດອະທິບາຍຄວາມໝາຍ ແລະ ຈຸດມຸ້ງໝາຍຂອງຜູ້ສື່ສານໄດ້.

**ຄ. "ເປັນຫຍັງ"** ຄຳວ່າ "ເປັນຫຍັງ" ມີພຽງ 7 ຄຳຈາກປະໂຫຍກຄຳຖາມທັງໝົດ 48 ຂໍ້. ເທົ່າກັບ 14.58%

***ຕົວຢ່າງ***

5. ເປັນຫຍັງການວິເຄາະຈິ່ງພິຈາລະນາຄວາມຖືກຕ້ອງທາງພາສາ? (Grade 11 teacher's guide book, 2022)

***ຕອບ*** ການວິເຄາະຕ້ອງພິຈາລະນາຄວາມຖືກຕ້ອງທາງດ້ານພາສາທີ່ຕ້ອງອ່ານເປັນສັນຍະລັກແທນຄວາມຮູ້ ແລະຄວາມຄິດຂອງຜູ້ຂຽນ (Grade 11 Textbook, 2015).

ຈາກຕົວຢ່າງ ການສະແດງຄຳຖາມ "ເປັນຫຍັງ" ເປັນຄຳແທນນາມໃຊ້ແທນຄຳຖາມມີຄວາມສຳພັບກັບຄຳຕອບໂດຍເປັນຕົວແທນຂອງຄຳຕອບໃນປະໂຫຍກຄຳຖາມເຊັ່ນ: ການວິເຄາະຈິ່ງພິຈາລະນາຄວາມຖືກຕ້ອງທາງພາສາຍ້ອນວ່າການວິເຄາະຕ້ອງພິຈາລະນາຄວາມຖືກຕ້ອງທາງດ້ານພາສາທີ່ຕ້ອງອ່ານເປັນສັນຍະລັກແທນຄວາມຮູ້ ແລະຄວາມຄິດຂອງຜູ້ຂຽນ.

6. ເປັນຫຍັງເຮົາຈຶ່ງຕ້ອງອ່ານໜັງສື ຫຼາຍໆປະເພດ? (Grade 12 Textbook, 2016)

***ຕອບ*** ເຮົາອ່ານໜັງສືປະເພດຕ່າງໆ ເພາະວ່າການອ່ານໜັງສືມີຄວາມສຳຄັນຕໍ່ຄວາມນຶກຄິດຂອງຕົນ, ຊ່ວຍພັດທະນາໃຫ້ມີສະຕິປັນຍາເພີ່ມຂຶ້ນ ສາມາດປັບຕົວເຂົ້າກັບສິ່ງແວດລ້ອມ ແລະ ຢູ່ໃນສັງຄົມໄດ້ຢ່າງມີຄວາມສຸກ (Grade 12 Textbook, 2016).

ຈາກຕົວຢ່າງ ການສະແດງຄຳຖາມ "ເປັນຫຍັງ" ເປັນຄຳແທນນາມໃຊ້ແທນຄຳຖາມມີຄວາມສຳພັບກັບຄຳຕອບໂດຍເປັນຕົວແທນຂອງຄຳຕອບໃນປະໂຫຍກຄຳຖາມເຊັ່ນ: ເຮົາອ່ານໜັງສືປະເພດຕ່າງໆ ຍ້ອນວ່າການອ່ານໜັງສືມີຄວາມສຳຄັນຕໍ່ຄວາມນຶກຄິດຂອງຕົນ, ຊ່ວຍພັດທະນາໃຫ້ມີສະຕິປັນຍາເພີ່ມຂຶ້ນ ສາມາດປັບຕົວເຂົ້າກັບສິ່ງແວດລ້ອມ ແລະ ຢູ່ໃນສັງຄົມໄດ້ຢ່າງມີຄວາມສຸກ.

3.1.2 ຄຳສະແດງຄຳຖາມ ທີ່ຖາມເຖິງຫຼາຍສິ່ງ.

ຄຳສະແດງຄຳຖາມທີ່ຖາມເຖິງຫລາຍສິ່ງ ໝາຍເຖິງການການຕັ້ງຄຳຖາມດ້ວຍຄຳແທນນາມບອກການຖາມ ເຊັ່ນ:ຄຳວ່າ "ຫຍັງແດ່, ແນວໃດແດ່,ໃສ, ອັນໃດແດ່" ຄຳສະແດງຄຳຖາມນີ້ຈະກົງກັບຄຳສະແດງຄຳຖາມ WH-Question ໃນພາສາອັງກິດຈະໃຊ້ໄດ້ທົ່ວໄປ,ຄຳສະແດງຄຳຖາມນີ້ສຳພັນກັບຄຳຕອບຫຼາຍສິ່ງຫລາຍຢ່າງມີ 7 ຄຳຄື: "ຫຍັງແດ່"," ປະການໃດແດ່", "ຈຸດສຳຄັນຫຍັງແດ່". "ແນວໃດແດ່". "ເລື່ອງໃດແດ່"," ປະເພດໃດແດ່", "ແບບໃດແດ່". ດັ່ງນີ້:

**ກ. "ຫຍັງແດ່"**

ຄຳວ່າ "ຫຍັງແດ່"ມີພຽງ 3 ຄຳຈາກປະໂຫຍກຄຳຖາມທັງໝົດ 48 ຂໍ້. ເທົ່າກັບ 6,25%

***ຕົວຢ່າງ***

7. ການອ່ານອອກສຽງຕ້ອງຮູ້ຫຍັງແດ່? (Grade 10 teacher's guide book, 2022)

**ຕອບ:** ການອ່ານອອກສຽງໄດ້ຈະຕ້ອງຮູ້ຕົວໜັງສື, ເຄື່ອງໝາຍວັກຕອນ ແລະ ຫຼັກໄວຍາກອນ (Grade 11 Textbook, 2015).

ຈາກຕົວຢ່າງ ການສະແດງຄຳຖາມ "ເປັນຫຍັງ" ເປັນຄຳແທນນາມໃຊ້ແທນຄຳຖາມມີຄວາມສຳພັນກັບຄຳຕອບໂດຍເປັນຕົວແທນຂອງຄຳຕອບໃນປະໂຫຍກຄຳຖາມ ເຊັ່ນ: ການອ່ານອອກສຽງ ຕ້ອງຮູ້ຕົວໜັງສື, ເຄື່ອງໝາຍວັກຕອນ ແລະ ຫຼັກໄວຍາກອນ.

**ຂ." ປະການໃດແດ່",**

ຄຳວ່າ "ປະການໃດແດ່" ມີພຽງ 1 ຄຳຈາກປະໂຫຍກຄຳຖາມທັງໝົດ 48 ຂໍ້. ເທົ່າກັບ 2,08%

***ຕົວຢ່າງ***

8. ອ່ານມີປະສິດທິພາບຕ້ອງປະກອບດ້ວຍຄວາມສາມາດປະການໃດແດ່? (Grade 10 teacher's guide book, 2022)

ຕອບ: ຢາກອ່ານໃຫ້ມີປະສິດທິພາບໄດ້ ຜູ້ອ່ານຕ້ອງມີຄວາມສາມາດອ່ານໄດ້ຢ່າງຖືກຕ້ອງ, ຄ່ອງແຄ້ວ, ຈັບເນື້ອໃນໃຈຄວາມຖືກຕ້ອງຕາມແນວຄິດຂອງຜູ້ຂຽນ, ເຖິງວ່າ ຜູ້ຂຽນຈະຕັ້ງໃຈຂຽນແບບລັບລົມຄົມໃນປານໃດກໍຕາມ ແຕ່ກໍສາມາດເຂົ້າໃຈເນື້ອໃນຈິດໃຈຂອງຜູ້ຂຽນຢາກສະແດງອອກ ແລະ ສາມາດຄັດເລືອກເອົາສິ່ງທີ່ເປັນປະໂຫຍດຈາກການອ່ານນັ້ນໄດ້. ໄວຍາກອນ (Grade 11 Textbook, 2015).

ຈາກຕົວຢ່າງ ການສະແດງຄຳຖາມ "ເປັນຫຍັງ" ເປັນຄຳແທນນາມໃຊ້ແທນຄຳຖາມມີຄວາມສຳພັນກັບຄຳຕອບໂດຍເປັນຕົວແທນຂອງຄຳຕອບໃນປະໂຫຍກຄຳຖາມເຊັ່ນ: ອ່ານມີປະສິດທິພາບຕ້ອງປະກອບດ້ວຍຄວາມສາມາດອ່ານໄດ້ຢ່າງຖືກຕ້ອງ, ຄ່ອງແຄ້ວ, ຈັບເນື້ອໃນໃຈຄວາມຖືກຕ້ອງຕາມແນວຄິດຂອງຜູ້ຂຽນ.

### 3.2 ຕຳແໜ່ງຂອງຄຳສະແດງຄຳຖາມ

ຕຳແໜ່ງຂອງຄຳສະແດງຄຳຖາມປາກົດໃນຕຳແໜ່ງ 2 ຕຳແໜ່ງຄື: ຄຳຖາມທີ່ຂຶ້ນຕົ້ນປະໂຫຍກ ແລະຄຳຖາມທີ່ລົງທ້າຍປະໂຫຍກ.

#### 3.2.1 ຄຳສະແດງຄຳຖາມທີ່ຂຶ້ນຕົ້ນປະໂຫຍກ

ຄຳສະແດງຄຳຖາມທີ່ຂຶ້ນຕົ້ນປະໂຫຍກໝາຍເຖິງຄຳສະແດງຄຳຖາມທີ່ປາກົດໃນຕຳແໜ່ງໜ້າຂອງປະໂຫຍກຄຳຖາມ, ຄຳສະແດງຄຳຖາມທີ່ຂຶ້ນຕົ້ນປະໂຫຍກ ຖາມເຖິງສິ່ງດຽວເທົ່ານັ້ນໃນເຊິ່ງມີແຕ່ 1 ຄຳເຊັ່ນ: "ເປັນຫຍັງ"

ຕົວຢ່າງ:

1. ເປັນຫຍັງການວິເຄາະຈິ່ງພິຈາລະນາຄວາມຕໍ່ເນື່ອງຂອງປະໂຫຍກ?
2. ເປັນຫຍັງການວິເຄາະພິຈາລະນາຄວາມຕໍ່ເນື່ອງຂອງເນື້ອເລື່ອງ ມີຄວາມສຳຄັນແນວໃດ ?
3. ເປັນຫຍັງການວິເຄາະພິຈາລະນາຈິ່ງຕ້ອງຈຳແນກຄວາມຮູ້ອອກຈາກຄວາມຄິດ ?
4. ເປັນຫຍັງການວິເຄາະພິຈາລະນາຈິ່ງຕ້ອງເບິ່ງຄວາມສຳພັນຈອງຫຼັກການ ແລະ ຕົວຢ່າງ ?
5. ເປັນຫຍັງການວິເຄາະຈິ່ງພິຈາລະນາຄວາມຖືກຕ້ອງທາງພາສາ?
6. ເປັນຫຍັງເຮົາຈິ່ງຕ້ອງອ່ານໜັງສື ຫຼາຍໆປະເພດ?

#### 3.2.2 ຄຳສະແດງຄຳຖາມທີ່ລົງທ້າຍປະໂຫຍກ

ຄຳສະແດງຄຳຖາມທີ່ລົງທ້າຍປະໂຫຍກໝາຍເຖິງຄຳສະແດງຄຳຖາມທີ່ປາກົດໃນຕຳແໜ່ງຫຼັງຂອງຄຳກິລິຍາຫຼັກໃນປະໂຫຍກຄຳຖາມ, ຄຳສະແດງຄຳຖາມທີ່ລົງທ້າຍປະໂຫຍກມີ 2 ຊະນິດຄືຄຳສະແດງຄຳຖາມທີ່ຖາມເຖິງສິ່ງດຽວ ແລະຄຳສະແດງຄຳຖາມທີ່ຖາມເຖິງຫລາຍສິ່ງ ເຊິ່ງມີທັງໝົດ 9 ຄຳເຊັ່ນ: ແມ່ນຫຍັງ"," ແນວໃດ", "ຫຍັງແດ່"," ປະການໃດແດ່", "ຈຸດສຳຄັນຫຍັງແດ່". "ແນວໃດແດ່". "ເລື່ອງໃດແດ່"," ປະເພດໃດແດ່", "ແບບໃດແດ່".

ຕົວຢ່າງ:

1. ວິທີອ່ານປຶ້ມເພື່ອຄວາມບັນເທີງ ຄວນປະຕິບັດແນວໃດ?

2. ຂະບວນການຄົ້ນຄວ້າຫາຄວາມໝາຍຈາກຕົວໜັງສືແມ່ນຫຍັງ?

3.ອ່ານມີປະສິດທິພາບຕ້ອງປະກອບດ້ວຍຄວາມສາມາດປະການໃດແດ່?

4.ວິທີອ່ານປຶ້ມເພື່ອສຶກສາຄົ້ນຄວ້າຈະຕ້ອງອ່ານຈຸດສຳຄັນໃດແດ່?

5. ການອ່ານຈັບໃຈຄວາມລວມຈະຕ້ອງໃຫ້ຮູ້ຫຍັງແດ່?

6. ປະເພດຂອງການອ່ານຕີຄວາມໝາຍມີແນວໃດແດ່?

7. ບົດທີ່ເຮົາຕ້ອງອ່ານເພື່ອຈັບໃຈຄວາມສຳຄັນ ມີບົດປະເພດໃດແດ່?

8. ເຮົາສາມາດສຶກສາຫາຄວາມຮູ້ໄດ້ຈາກສື່ແບບໃດແດ່?

9. ຄວາມຮູ້ກ່ຽວກັບຊີວິດປະຈໍາວັນທີ່ເຮົາຈະໄດ້ອ່ານມີເລື່ອງໃດແດ່?

## 4. ວິພາກຜົນ

1. ລັກສະນະຄໍາສະແດງຄໍາຖາມແມ່ນຄໍາທີ່ສະແດງໃຫ້ຮູ້ວ່າປະໂຫຍກນັ້ນເປັນປະໂຫຍກຄໍາຖາມເຊັ່ນ: ຄໍາວ່າ ໃຜ, ແມ່ນຫຍັງ, ແນວໃດ,ສິ່ງໃດ, ເປັນຫຍັງ, ຫຍັງແດ່, ແນວໃດແດ່, ອັນໃດແດ່..ບົວລີ ປະພາພັນ ພ້ອມຄະນະ (Boualy, 2015) ເວົ້າວ່າ ການຕັ້ງຄໍາຖາມດ້ວຍຄໍາແທນນາມບອກການຖາມປະກອບມີຄໍາຖາມທີ່ຖາມເຖິງສິ່ງດຽວ ແລະຄໍາຖາມທີ່ຖາມເຖິງຫລາຍສິ່ງດັ່ງລາຍລະອຽດ ລຸ່ມນີ້:

1) ຄໍາສະແດງຄໍາຖາມທີ່ຖາມເຖິງສິ່ງດຽວ

ຄໍາສະແດງຄໍາຖາມທີ່ຖາມເຖິງສິ່ງດຽວໝາຍເຖິງການການຕັ້ງຄໍາຖາມດ້ວຍຄໍາແທນນາມບອກການຖາມ ເຊັ່ນ:ຄໍາວ່າ “ໃຜ,ແນວໃດ,ໃສ,ແມ່ນຫຍັງ” ຄໍາສະແດງຄໍາຖາມນີ້ຈະກົງກັບຄໍາສະແດງຄໍາຖາມ WH- Question ໃນພາສາອັງກິດຈະໃຊ້ໄດ້ທົ່ວໄປ,ຄໍາສະແດງຄໍາຖາມນີ້ສໍາພັນກັບຄໍາຕອບສິ່ງໃດສິ່ງໜຶ່ງ ມີ 3 ຄໍາຄື: “ແມ່ນຫຍັງ”, “ແນວໃດ”, “ເປັນຫຍັງ”

2) ຄໍາສະແດງຄໍາຖາມ ທີ່ຖາມເຖິງຫຼາຍສິ່ງ

ຄໍາສະແດງຄໍາຖາມທີ່ຖາມເຖິງຫລາຍສິ່ງ ໝາຍເຖິງການການຕັ້ງຄໍາຖາມດ້ວຍຄໍາແທນນາມບອກການຖາມ ເຊັ່ນ:ຄໍາວ່າ “ຫຍັງແດ່, ແນວໃດແດ່,ໃສ, ອັນໃດແດ່” ຄໍາສະແດງຄໍາຖາມນີ້ຈະກົງກັບຄໍາສະແດງຄໍາຖາມ WH-Question ໃນພາສາອັງກິດຈະໃຊ້ໄດ້ທົ່ວໄປ,ຄໍາສະແດງຄໍາຖາມນີ້ສໍາພັນກັບຄໍາຕອບຫຼາຍສິ່ງຫລາຍຢ່າງມີ 7 ຄໍາຄື: “ຫຍັງແດ່”,“ ປະການໃດແດ່”, “ຈຸດສໍາຄັນຫຍັງແດ່”. “ແນວໃດແດ່”. “ເລື່ອງໃດແດ່”,“ ປະເພດໃດແດ່”, “ແບບໃດແດ່”.

2. ຕໍາແໜ່ງຂອງຄໍາສະແດງຄໍາຖາມປາກົດໃນຕໍາແໜ່ງ 2 ຕໍາແໜ່ງຄື: ຄໍາຖາມທີ່ຂຶ້ນຕົ້ນປະໂຫຍກ ແລະຄໍາຖາມທີ່ລົງທ້າຍປະໂຫຍກ.

1) ຄໍາສະແດງຄໍາຖາມທີ່ຂຶ້ນຕົ້ນປະໂຫຍກ

ຄໍາສະແດງຄໍາຖາມທີ່ຂຶ້ນຕົ້ນປະໂຫຍກໝາຍເຖິງຄໍາສະແດງຄໍາຖາມທີ່ປາກົດໃນຕໍາແໜ່ງໜ້າຂອງປະໂຫຍກຄໍາຖາມ, ຄໍາສະແດງຄໍາຖາມທີ່ຂຶ້ນຕົ້ນປະໂຫຍກ ຖາມເຖິງສິ່ງດຽວເທົ່ານັ້ນໃນເຊິ່ງມີແຕ່ 1 ຄໍາເຊັ່ນ: “ເປັນຫຍັງ”

2) ຄໍາສະແດງຄໍາຖາມທີ່ລົງທ້າຍປະໂຫຍກ

ຄໍາສະແດງຄໍາຖາມທີ່ລົງທ້າຍປະໂຫຍກໝາຍເຖິງຄໍາສະແດງຄໍາຖາມທີ່ປາກົດໃນຕໍາແໜ່ງຫຼັງຂອງຄໍາກິລິຍາຫຼັກໃນປະໂຫຍກຄໍາຖາມ, ຄໍາສະແດງຄໍາຖາມທີ່ລົງທ້າຍປະໂຫຍກມີ 2 ຊະນິດຄືຄໍາສະແດງຄໍາຖາມທີ່ຖາມເຖິງສິ່ງດຽວ ແລະຄໍາສະແດງຄໍາຖາມທີ່ຖາມເຖິງຫລາຍສິ່ງ ເຊິ່ງມີທັງໝົດ 9 ຄໍາເຊັ່ນ: ແມ່ນຫຍັງ”,“ ແນວໃດ”, “ຫຍັງແດ່”,“ ປະການໃດແດ່”, “ຈຸດສໍາຄັນຫຍັງແດ່”. “ແນວໃດແດ່”. “ເລື່ອງໃດແດ່”, “ ປະເພດໃດແດ່”, “ແບບໃດແດ່”.

## 5. ສະຫຼຸບ

ຈາກການວິເຄາະລັກສະນະຂອງປະໂຫຍກຄໍາຖາມປະໂຫຍກຄໍາຖາມໃນການຈັດການຮຽນການສອນວິຊາພາສາລາວ ຊັ້ນມັດທະຍົມປາຍ ປະກອບດ້ວຍພາກສ່ວນທີ່ເປັນເນື້ອໃນທີ່ເປັນຄໍາສັບສະເພາະສະແດງຈຸດສໍາຄັນຂອງການຖາມທັງດ້ານຄວາມໝາຍຂອງການອ່ານ, ລັກສະນະຂອງການອ່ານ,ປະເພດຂອງການອ່ານ

ຄໍາສະແດງຄໍາຖາມທີ່ເປັນການຊີ້ບອກການຖາມທີ່ຖາມເຖິງສິ່ງດຽວ ແລະ ຖາມເຖິງຫຼາຍສິ່ງພົບວ່າຄໍາສະແດງຄໍາຖາມທີ່ຖາມເຖິງສິ່ງດຽວມີຫຼາຍກວ່າຄໍາຖາມທີ່ສະແດງເຖິງຫຼາຍສິ່ງ. ໃນນັ້ນຄໍາສະແດງຄໍາຖາມທີ່ຖາມເຖິງສິ່ງດຽວສະແດງໃຫ້ເຫັນການຖາມເຖິງສະເພາະເຈາະຈົງເນື້ອໃນຂອງບົດຮຽນເຊິ່ງໄດ້ກໍານົດລັກສະນະຂອງສິ່ງທີ່ຕ້ອງການຖາມໃນຄໍາສະແດງຄໍາຖາມແຕ່ລະຂໍ້.

ຕໍາແໜ່ງຂອງຄໍາສະແດງຄໍາຖາມປະກອບມີຄໍາສະແດງຄໍາຖາມທີ່ຂຶ້ນຕົ້ນປະໂຫຍກ ແລະ ຄໍາສະແດງຄໍາຖາມທີ່ລົງທ້າຍປະໂຫຍກ, ຄໍາສະແດງຄໍາຖາມທີ່ຂຶ້ນຕົ້ນປະໂຫຍກເປັນຄໍາສະແດງຄໍາຖາມທີ່ຖາມເຖິງສິ່ງດຽວເທົ່ານັ້ນ, ສ່ວນຄໍາສະແດງຄໍາຖາມທີ່ລົງທ້າຍປະໂຫຍກມີທັງຄໍາຖາມທີ່ຖາມເຖິງສິ່ງດຽວ ແລະ ຄໍາສະແດງຄໍາຖາມທີ່ຖາມເຖິງຫຼາຍສິ່ງ, ເມື່ອພິຈາລະນາຄວາມໝາຍຂອງປະໂຫຍກຄໍາຖາມທີ່ໃຊ້ຄໍາສະແດງຄໍາຖາມໃນຕໍາແໜ່ງຕ່າງກັນເຫັນວ່າຄໍາສະແດງຄໍາຖາມທີ່ຂຶ້ນຕົ້ນປະໂຫຍກ ແລະ ຄໍາສະແດງຄໍາຖາມທີ່ລົງທ້າຍປະໂຫຍກບໍ່ໄດ້ເຫັນໃຫ້ຄວາມໝາຍຂອງປະໂຫຍກຄໍາຖາມປ່ຽນໄປ ແຕ່ເປັນການສະແດງການເນັ້ນໃຈຄວາມສໍາຄັນຂອງຜູ້ຖາມວ່າຕ້ອງການເນັ້ນພາກສ່ວນໃດຫຼາຍກວ່າ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າ ໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ.

## 7. ເອກະສານອ້າງອີງ


Paphaphan, B. and Co-Authors. (2015). *Lao language: For foreigners*, Faculty of Letters - National University of Laos, Vientiane Prefecture.

Byju (2023), *Interrogative Sentences - Meaning, Definition, Types, Uses and Examples*, accessed-04/05/2023, at webpage https://tinyurl.com/yf8u8yaf.

Dictionary, C. (2023). *sentence*, accessed 04/05/2023, at webpage https://tinyurl.com/2wafe4e4.

Bounlom, S. and Co-Authors. (2022). *Lao language Grade 9 teacher's guide book*, National Research Institute for Educational Science - MOE.

Bounlom, S. and Co-Authors. (2022). *Lao language Grade 10 teacher's guide book*, National Research Institute for Educational Science - MOE.

Phonesily, O. and Co-Authors. (2014). *Lao language Grade 10 Textbook*, National Research Institute for Educational Science - MOE.

Bounlom, S. and Co-Authors. (2022). *Lao language Grade 11 teacher's guide book*, National Research Institute for Educational Science - MOE.

Phonesily, O. and Co-Authors. (2015), *Lao language Grade 11 Textbook*, National Research Institute for Educational Science - MOE.

Phomma, K. and Co-Authors. (2016). *Lao language Grade 12 Textbook*, National Research Institute for Educational Science - MOE.

Sengmany, K. (1998). *Language theory for Pedagogical student system 11+3*, Educational publishing house, Vientiane Prefecture.

Education, M.O. (2013). *3 Characteristics and 5 Fundamentals of Education*, The state enterprise of educational printing house, Vientiane Prefecture.

Moe, N.R.I.F.E.S.-. (2011). *High school curriculum*, Vientiane Prefecture.

Nounnavong, O. and Sisavan, K. (2000). *Lao language - Grammar: General Education School*, Edt 1, National Research Institute for Educational Science - MOE.

Yang, H. (2022). *Interrogative Sentences: Explanation and Examples*, accessed 04/05/2023, at webpage https://tinyurl.com/46t33whe.